ພັກປະຊາຊົນ ປະຕິວັດລາວ

----------------

# ມະຕິ

## ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງສາລະວັນ ຄັ້ງທີX

ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງ ຄັ້ງທີX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນລະຫວ່າງວັນທີ 6 - 7 ສິງຫາ 2025 ທີ່ສະໂມສອນຂອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງສະຫາຍ **ປະລິນຍາເອກ ດາວວົງ ພອນແກ້ວ** ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ເຈົ້າແຂວງສາລະວັນ. ກອງປະຊຸມຮູ້ສຶກເປັນກຽດ ແລະ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ຂໍ່ານັບຮັບຕ້ອນ ສະຫາຍ **ພົນເອກ ຈັນສະໝອນ ຈັນຍາລາດ** ກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ທີ່ໄດ້ເຂົ້າຮ່ວມ ແລະ ຊີ້ນຳກອງປະຊຸມຈົນສຳເລັດ. ກອງປະຊຸມຄັ້ງນີ້ມີຜູ້ແທນເຂົ້າຮ່ວມທັງໝົດ 447 ສະຫາຍ, ຍິງ 58 ສະຫາຍ, ໃນນັ້ນ, ຜູ້ແທນສົມບູນ ເຂົ້າຮ່ວມ 363 ສະຫາຍ, ຍິງ 54 ສະຫາຍ; ມາຈາກຂະແໜງການ, ກົມກອງອ້ອມຂ້າງແຂວງ ແລະ 8 ຕົວເມືອງ, ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດ ໃນທົ່ວແຂວງສາລະວັນ ຈຳນວນ 16,839 ສະຫາຍ, ຍິງ 4,051 ສະຫາຍ, ມີແຂກຖືກເຊີນເຂົ້າຮ່ວມທັງໝົດ 84 ສະຫາຍ, ຍິງ 4 ສະຫາຍ.

ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງສາລະວັນ ຄັ້ງທີX ໄດ້ດຳເນີນໄປພາຍໃຕ້ຄຳຂວັນ: **"ຍົກສູງບົດບາດການນຳພາຂອງພັກ, ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງຂອງລັດ, ເສີມຂະຫຍາຍມູນເຊື້ອສາມັກຄີ ດຸໝັ່ນ ອາດຫານ, ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ພັດທະນາກ້າວຂຶ້ນ ຕາມທິດສີຂຽວ ແລະ ຍືນຍົງ"**.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີເປັນເອກະພາບ, ຕາມລະບຽບຂອງພັກ ແລະ ສອດຄ່ອງກັບທິດຊີ້ນຳຂອງສູນກາງພັກ ໃນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຢ່າງມີປະຊາທິປະໄຕ ແລະ ມີຄວາມໝາຍສຳຄັນທາງດ້ານປະຫວັດສາດ ແຫ່ງການປັບປຸງ ແລະ ກໍ່ສ້າງພັກ, ເຊິ່ງໄດ້ກາຍເປັນຂີດໝາຍອັນໃໝ່ ຂອງສະມາຊິກພັກ, ພະນັກງານ - ລັດຖະກອນ ທົ່ວແຂວງສາລະວັນ, ສະແດງອອກເຖິງສະຕິປັນຍາ ທີ່ມີລັກສະນະເປັນມູນເຊື້ອ, ຮັບປະກັນໄດ້ລັກສະນະສືບທອດຕໍ່ເນື່ອງ ແລະ ທັນເປັນໜຸ່ມ ຕາມລະດັບຄາດໝາຍ ພ້ອມທັງເປັນເອກະພາບຮັບຮອງເອົາບັນຫາພື້ນຖານທີ່ສຳຄັນ ຂອງອົງຄະນະພັກແຂວງສາລະວັນ ດັ່ງນີ້:

**I.** ກອງປະຊຸມໃຫຍ່ໄດ້ເປັນເອກະສັນຮັບຮອງເອົາ ລາຍງານການເມືອງທີ່ສະເໜີຕໍ່ກອງປະຊຸມ ໃຫຍ່ຜູ້ແທນຂອງອົງຄະນະພັກແຂວງ ຄັ້ງທີX ເຊິ່ງໄດ້ຕີລາຄາຜົນການ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີIX ໃນ 5 ປີຜ່ານມາ ຢ່າງຮອບດ້ານ, ໃນນັ້ນ: ໄດ້ຕັ້ງໜ້າປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຂອງພັກ ເຮັດໃຫ້ທົ່ວແຂວງ ມີຄວາມເປັນລະບຽບ ຮຽບຮ້ອຍ ແລະ ມີຄວາມສະຫງົບປອດໄພໂດຍພື້ນຖານ, ການພັດທະນາເສດຖະກິດ -

ສັງຄົມ ກໍມີທ່ວງທ່າ ຂະຫຍາຍຕົວກ້າວຂຶ້ນ, ວຽກງານອົງການອຳນາດລັດ ກໍໄດ້ມີການປັບປຸງ ກົງຈັກການຈັດຕັ້ງແຕ່ລະຂັ້ນ ມີຄວາມກະທັດຮັດ ໂລ່ງລ່ຽນ ມີປະສິດທິພາບ ແລະ ເຂັ້ມແຂງ. ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງ ມະຫາຊົນ ກໍໄດ້ເສີມຂະຫຍາຍມູນເຊື້ອບົດບາດ ເຕົ້າໂຮມຄວາມສາມັກຄີ ເປັນຕົວແທນຂອງກຸ່ມຄົນ, ຊັ້ນຄົນຕ່າງໆ ໄດ້ເປັນຢ່າງດີ. ວຽກງານການຕ່າງປະເທດ ໄດ້ເພີ່ມທະວີສາຍພົວພັນແບບພິເສດ ຮ່ວມມືຮອບດ້ານກັບບັນດາແຂວງຂອງ ສສ ຫວຽດນາມ ເປີດກວ້າງການພົວພັນກັບຈັງຫວັດອຸບົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ຕາມແນວທາງການຕ່າງປະເທດຂອງພັກ. ໄດ້ສຸມໃສ່ຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ເຮັດໃຫ້ການຈັດຕັ້ງຮາກຖານບ້ານ ໄດ້ມີຄວາມໜັກແໜ້ນ, ເຂັ້ມແຂງ ສາມາດປະກາດບ້ານພັດທະນາ, ເມືອງເຂັ້ມແຂງຮອບດ້ານ, ແຂວງເປັນຫົວໜ່ວຍຍຸດທະສາດບາງດ້ານ. ວຽກງານການປັບປຸງກໍ່ສ້າງພັກ ແລະ ພະນັກງານ ກໍໄດ້ຫັນເປັນຄຸນນະພາບ ມີຜົນສຳເລັດໃໝ່ໃນຫຼາຍດ້ານ ສາມາດຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນໄດ້ຢ່າງຕໍ່ເນື່ອງ. ບັນດາຜົນສຳເລັດ  ທີ່ກ່າວມານັ້ນ ໄດ້ປະກອບສ່ວນອັນສຳຄັນ ແລະ ໃຫຍ່ຫຼວງ ເພື່ອສ້າງປະຖົມປັດໃຈ ໃຫ້ແກ່ການສ້າງສາພັດທະນາແຂວງສາລະວັນ ກ້າວຂຶ້ນສູ່ຈຸດໝາຍທີ່ວາງໄວ້.  ຄຽງຄູ່ກັບຜົນງານທີ່ຍາດມາໄດ້  ລາຍງານການເມືອງຍັງໄດ້ຍົກໃຫ້ເຫັນຈຸດອ່ອນ - ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນ ໄດ້  ໃນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງທີIX ຢ່າງພາວະວິໄສ ແລະ ໄດ້ກຳນົດທິດທາງຈຸດສຸມ, ຄາດໝາຍ ສູ້ຊົນໃນ 5 ປີຕໍ່ໜ້າ 2026 - 2030 ເພື່ອສ້າງໃຫ້ມີການຫັນປ່ຽນ ຢ່າງແຂງແຮງ ເລິກເຊິ່ງ ແລະ ຮອບດ້ານ ເຮັດໃຫ້ແນວທາງນະໂຍບາຍ ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີX  ຂອງອົງຄະນະພັກແຂວງ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ບັນລຸຜົນຕາມລະດັບຄາດໝາຍທີ່ວາງໄວ້.

**II.** ກອງປະຊຸມ ໄດ້ຮັບຮອງເອົາ ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ - ສັງຄົມ ໃນ 5ປີ 2021 – 2025 ຜ່ານມາ. ເຊິ່ງເຫັນວ່າ ພວກເຮົາໄດ້ຜ່ານຜ່າຄວາມຫຍຸ້ງຍາກທາງດ້ານ ເສດຖະກິດ (ອັດຕາເງິນກີບອ່ອນຄ່າ, ສິນຄ້າລາຄາແພງ, ການແຜ່ລະບາດຂອງ ພະຍາດໂຄວິດ-19 ແລະ ຈາກໄພພິບັດທາງທຳມະຊາດ).  ແຕ່ຍ້ອນມີແນວທາງທີ່ຖືກຕ້ອງ ຈຶ່ງເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວໃນລະດັບ 5.3%, ລວມຍອດຜະລິດຕະພັນພາຍໃນບັນລຸໄດ້ 36 ພັນກວ່າຕື້ກີບ ທຽບໃສ່ 5 ປີກ່ອນ ເພີ່ມຂຶ້ນ 16 ພັນກວ່າຕື້ກີບ ສະເລ່ຍໃສ່ພົນລະເມືອງ 17 ລ້ານກວ່າກີບ ຕໍ່ຄົນຕໍ່ປີ, ການຍາດແຍ່ງດຶງດູດການລົງທຶນປະຕິບັດໄດ້ 7,542 ຕື້ກວ່າກີບ, ເທົ່າກັບ 86%. **ພົ້ນເດັ່ນ** ແມ່ນໂຄງການກໍ່ສ້າງໂຮງງານຜະລິດປຸງແຕ່ງແປ້ງມັນ, ຫົວອາຫານສັດ, ປຸ໋ຍຊີວະພາບ, ໂຄງການສຶກສາສຳຫຼວດ ພັດທະນາໄຟຟ້າພະລັງງານລົມ, ໄຟຟ້າແສງຕາເວັນ, ຖ່ານຫີນ - ແຮ່ທາດ. ການຈັດເກັບລາຍຮັບເຂົ້າງົບປະມານຂອງລັດ ປະຕິບັດໄດ້  1,078 ຕື້ກີບ, ປີ2023 ແລະ 2024 ໄດ້ລື່ນແຜນການ; ຄວາມທຸກຍາກຂອງປະຊາຊົນ ກໍໄດ້ຮັບການແກ້ໄຂ ເມື່ອທຽບໃສ່ 5 ປີຜ່ານມາ ບ້ານທຸກຍາກຍັງເຫຼືອ 94 ບ້ານ, ກວມເອົາ 16% ແລະ ຍັງ 3,756 ຄອບຄົວ ກວມເອົາ 5%  **ພົ້ນເດັ່ນ** ແມ່ນສາມາດປະກາດຮັບຮອງເອົາການສ້າງບ້ານ ແສນວັງໃຫຍ່, ບ້ານບຶງໄຊ, ບ້ານນາປົ່ງ, ບ້ານຄຳທອງ, ບ້ານຕານປ່ຽວ, ບ້ານໜອງແກ, ບ້ານດົງ, ບ້ານວາປີ, ບ້ານພູຖ້ຳພວງ ເປັນ

ບ້ານໃຫຍ່ຄ້າຍຄືຕົວເມືອງນ້ອຍໃນຊົນນະບົດ ແລະ ປະກາດຮັບຮອງເອົາເມືອງຄົງເຊໂດນ, ເມືອງສາລະວັນ ແລະ ເມືອງເລົ່າງາມ ເປັນເມືອງເຂັ້ມແຂງຮອບດ້ານ.

ເພື່ອສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຊຸດທີ X. ກອງປະຊຸມ ໄດ້ຮັບຮອງເອົາ 6 ເປົ້າໝາຍ ແລະ 4 ຄາດໝາຍໃຫຍ່ ແຕ່ປີ 2026 -2030 ຄື: 1) ສ້າງແຂວງສາລະວັນໃຫ້ເປັນຫົວໜ່ວຍຍຸດທະສາດ ໃຫ້ສຳເລັດ; 2) ຟື້ນຟູ ແລະ ປົກປັກຮັກສາ 3 ປະເພດປ່າ ຕາມທິດສີຂຽວ; 3) ສ້າງແຂວງໃຫ້ເປັນແຂວງທີ່ເຊື່ອມຕໍ່ ຕາມແລວທາງເສດຖະກິດຕາເວັນອອກ - ຕາເວັນຕົກ(EWECS) ຫວຽດນາມ - ໄທ; 4) ສ້າງແຂວງໃຫ້ມີຄວາມເຂັ້ມແຂງດ້ານຄວາມສະຫງົບ ເລີ່ມແຕ່ຮາກຖານຂັ້ນບ້ານ. ພ້ອມດຽວກັນນັ້ນ; ຕ້ອງອອກແຮງຂຸດຄົ້ນທຸກທ່າແຮງບົ່ມຊ້ອນ ເພື່ອສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງຢ່າງແຂງແຮງ ດ້ວຍການຊຸກຍູ້ສົ່ງເສີມໃຫ້ປະຊາຊົນພະລິດ ແລະ ແລກປ່ຽນຊື້ - ຂາຍສິນຄ້າ ທີ່ມີຄຸນນະພາບ, ຂະຫຍາຍຕະຫຼາດ ຈຳໜ່າຍສິນຄ້າ ຢ່າງກວ້າງຂວາງ ທັງພາຍໃນ ແລະ ຕ່າງປະເທດ, ສູ້ຊົນສ້າງພື້ນຖານເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍ 6.7% ຕໍ່ປີ, ສະເລ່ຍລາຍຮັບຕໍ່ຫົວຄົນໃຫ້ບັນລຸ 23 ລ້ານກວ່າກີບ ຕໍ່ຄົນຂຶ້ນໄປ; ພື້ນຖານໂຄງລ່າງໄດ້ຮັບການພັດທະນາໃຫ້ດີຂຶ້ນ, ໂຄງປະກອບກະສິກຳບາງດ້ານໃຫ້ທັນສະໄໝ, ສີຂຽວ ແລະ ຍືນຍົງ; ສ້າງມູນຄ່າພະລິດຕະພັນກະສິກຳໃຫ້ສູງຂຶ້ນ, ປັບປຸງລະບົບບໍລິຫານໂດຍຫັນໄປສູ່ທັນສະໄໝ ໂດຍສະເພາະທະນາຄານ ແລະ ສະຖາບັນການເງິນຕ່າງໆ ເພື່ອເຮັດໃຫ້ການຈັດເກັບລາຍຮັບເຂົ້າງົບປະມານຂອງລັດ ໃຫ້ໄດ້ລື່ນແຜນການ; ພັດທະນາພື້ນຖານໂຄງລ່າງເສັ້ນທາງເຊື່ອມໂຍງເສດຖະກິດການຄ້າ ຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກ ຄືເອົາດ່ານສາກົນລະໄລ, ດ່ານສາກົນປາກຕະພານ ຕິດພັນກັບການປັບປຸງຍົກລະດັບພື້ນຖານໂຄງລ່າງ ແລະ ຫັນເປັນທັນສະໄໝ ເຊັ່ນ: ລະບົບສາງຄ່ຽນຖ່າຍສິນຄ້າ, ລະບົບໂລຈິດສຕິກ ແລະ ອື່ນໆ , ຍົກລະດັບດ່ານໂກຕ່າຍ - ໂຮ່ເວີນ ຂຶ້ນເປັນດ່ານສາກົນ ເປັນປະຕູເສດຖະກິດດ້ານຕາເວັນອອກ-ຕາເວັນຕົກ, ສູ້ຊົນໃຫ້ໄດ້ປະຕິບັດໂຄງການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ 6 ແຂວງສາລະວັນ - ຈັງຫວັດອຸບົນ; ສູ້ຊົນແກ້ໄຂຄວາມທຸກຍາກໃຫ້ໄດ້ໂດຍພື້ນຖານ. ຢາກເຮັດໄດ້ຄືແນວນັ້ນ ຕ້ອງຫັນເປັນແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ຢ່າງລະອຽດພ້ອມທັງປຸກລະດົມ ບັນດາພາກສ່ວນເສດຖະກິດ ແລະ ທົ່ວປວງຊົນ ສຸມທຶນຮອນເຂົ້າໃສ່ການຈັດຕັ້ງປະຕິບັດໃຫ້ເກີດເປັນຮູບປະທຳ ແລະ ໄດ້ຮັບຜົນສຳເລັດອັນສະຫງ່າງາມ.

**III.** ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ແຂວງສະໄໝທີIX ໄດ້ຕີລາຄາສູງຕໍ່ຄວາມພະຍາຍາມໃນການປັບປຸງກໍ່ສ້າງພັກ ເຮັດໃຫ້ການຈັດຕັ້ງຮາກຖານພັກ, ສະມາຊິກພັກ ມີການເຕີບໃຫຍ່ຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ ສອດທ້ອຍເຂົ້າໃນທຸກຂົງເຂດວຽກງານ, ຫຼາຍໜ່ວຍພັກໄດ້ຮັບຮອງເປັນໜ່ວຍພັກປອດໃສ ເຂັ້ມແຂງ ແລະ ໜັກແໜ້ນຢ່າງຕໍ່ເນື່ອງ. ໃນ 5 ປີຜ່ານມາໜ່ວຍພັກເພີ່ມຂຶ້ນ121 ໜ່ວຍ, ສະມາຊິກພັກເພີ່ມຂຶ້ນ2,657 ສະ ຫາຍ, ມີໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຳນວນ 3,139 ເທື່ອໜ່ວຍ, ພ້ອມນັ້ນ ກໍຍັງຊີ້ໃຫ້ ເຫັນເຖິງຈຸດອອ່ນ, ຂໍ້ຄົງຄ້າງ ແລະ ສາເຫດ ທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ.

**IV.** ຜູ້ແທນກອງປະຊຸມ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕ ຂອງຕົນປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານພັກແຂວງຊຸດໃໝ່ ຈຳນວນ 35 ສະຫາຍ, ຍິງ 4 ສະຫາຍ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1) ສະຫາຍ ປອ ດາວວົງ ພອນແກ້ວ
2) ສະຫາຍ ປະເດີມພອນ ສົນທະນີ
3) ສະຫາຍ ນາງ ບຸນທະວີ ດວງລາສີ
4) ສະຫາຍ ຈັນສະໝອນ ພົມມະແສງ
5) ສະຫາຍ ແຫວນເພັດ ລັດດາວົງ
6) ສະຫາຍ ສົມສັກ ທົງຄຳຫານ
7) ສະຫາຍ ທອງດີ ຈັນທະວົງ
8) ສະຫາຍ ພົຈວ ສີເສີດ ສອນດາລາ
9) ສະຫາຍ ຈັນສີລອນ ສີສົມບູນ
10) ສະຫາຍ ປອ ສະໄໝ ໂພທິສານ
11) ສະຫາຍ ປອ ໂພສີ ແກ້ວສີພັນດອນ
12) ສະຫາຍ ບຸນເນື້ອ ຫຼອງຄຳໄຕ
13) ສະຫາຍ ບຸນຍູ້ ຈັນທະລັງສີ
14) ສະຫາຍ ທອງໃສ ເພັດລາສີ
15) ສະຫາຍ ຈັນເພັງ ສາຍທຳມະວົງ
16) ສະຫາຍ ບຸນເຕີ້ຍ ດວງສຸລິຍະວົງສາ
17) ສະຫາຍ ນາງ ວາດສະໝາ ໂພໄຊຍະວົງ
18) ສະຫາຍ ວິໄລ ສີລາດວງໃຈ
19) ສະຫາຍ ມະໄລວອນ ສີປະເສີດ
20) ສະຫາຍ ຄຳຜ່ານ ສີລາວີ
21) ສະຫາຍ ເວີນມະນີ ມຸ່ງສີວົງສາ
22) ສະຫາຍ ສັກດາ ແກ້ວດວງສີ
23) ສະຫາຍ ນາງ ສູນໄກ ໄຊຍະແສງ
24) ສະຫາຍ ພັອ ໂສພາ ໂພໄຊຍະວົງ
25) ສະຫາຍ ຄຳສະໄຫວ ວິລະກອນ
26) ສະຫາຍ ໂພສີ ຫຼວງສຸລິວັນ
27) ສະຫາຍ ບົວແກ້ວ ວົງຄຳຈັນ
28) ສະຫາຍ ໂພທິຍາ ວົງຈອມສີ
29) ສະຫາຍ ພອນປະເສີດ ລາຊາໂພ
30) ສະຫາຍ ສຸນີ ນາມມະບົວລີ

31) ສະຫາຍ ສີວັນພະກອນ ວົງບຸນທັນ

32) ສະຫາຍ ຈັນທະວອນ ດ້ວງປັນຍາ

33) ສະຫາຍ ສຸດທິໂສມ ແກ້ວໄຊຍະວົງ

34) ສະຫາຍ ນາງ ຈັນທະຈອນ ຫວາດທະລາວົງ

35) ສະຫາຍ ສຸກສະເຫຼີມພອນ ໄມມະນີ

V. ກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານພັກ ແຂວງສາລະວັນ ຄັ້ງທີX ໄດ້ເປັນເອກະສັນ ເລືອກຕັ້ງເອົາຄະນະປະຈໍາພັກແຂວງ, ປະຊາມະຕິເອົາເລຂາ, ຮອງເລຂາ ຄະນະບໍລິຫານງານພັກແຂວງ ແລະ ເລືອກຕັ້ງເອົາປະທານ, ຮອງປະທານຄະນະກວດກາພັກແຂວງ ດັ່ງນີ້:

1. ໄດ້ເລືອກຕັ້ງເອົາຄະນະປະຈໍາພັກແຂວງ ຈໍານວນ11 ສະຫາຍ, ຍິງ 1 ສະຫາຍ ດັ່ງມີລາຍຊື່ລຸ່ມນີ້:

1) ສະຫາຍ ປອ ດາວວົງ ພອນແກ້ວ

2) ສະຫາຍ ປະເດີມພອນ ສົນທະນີ

3) ສະຫາຍ ນາງ ບຸນທະວີ ດວງລາສີ

4) ສະຫາຍ ຈັນສະໝອນ ພົມມະແສງ

5) ສະຫາຍ ແຫວນເພັດ ລັດດາວົງ

6) ສະຫາຍ ສົມສັກ ທົງຄໍາຫານ

7) ສະຫາຍ ທອງດີ ຈັນທະວົງ

8) ສະຫາຍ ພົຈວ. ສີເສີດ ສອນດາລາ

9) ສະຫາຍ ຈັນສີລອນ ສີສົມບູນ

10)ສະຫາຍ ປອ ສະໄໝ ໂພທິສານ

11)ສະຫາຍ ປອ ໂພສີ ແກ້ວສີພັນດອນ

2. ໄດ້ປະຊາມະຕິ ຮັບຮອງເອົາເລຂາ ແລະ ຮອງເລຂາ ຄະນະບໍລິຫານງານພັກແຂວງ ດັ່ງມີລາຍຊື່ລຸ່ມນີ້:

1) ສະຫາຍ ປອ ດາວວົງ ພອນແກ້ວ ເປັນເລຂາຄະນະບໍລິຫານງານພັກແຂວງ

2) ສະຫາຍ ປະເດີມພອນ ສົນທະນີ ເປັນຮອງເລຂາຄະນະບໍລິຫານງານພັກແຂວງ

3) ສະຫາຍ ນາງ ບຸນທະວີ ດວງລາສີ ເປັນຮອງເລຂາຄະນະບໍລິຫານງານພັກແຂວງ

3. ເລືອກຕັ້ງເອົາປະທານ ແລະ ຮອງປະທານຄະນະກວດກາພັກແຂວງ ດັ່ງມີລາຍຊື່ລຸ່ມນີ້:

1) ສະຫາຍ ສົມສັກ ທົງຄໍາຫານ ເປັນປະທານຄະນະກວດກາພັກແຂວງ

2) ສະຫາຍ ແສງທອງ ສີອ່ອນສາ ເປັນຮອງປະທານຄະນະກວດກາພັກແຂວງ

3) ສະຫາຍ ນາງ ແສງອາລຸນ ຈັນທະລາດ ເປັນຮອງປະທານຄະນະກວດກາພັກແຂວງ

4) ສະຫາຍ ພະນົມພອນ ສີວິໄຊ ເປັນຮອງປະທານຄະນະກວດກາພັກແຂວງ

**VI.** ກອງປະຊຸມໄດ້ເລືອກຕັ້ງເອົາຜູ້ແທນສົມບູນ ແລະ ສຳຮອງ ໄປຮ່ວມກອງປະຊຸມໃຫຍ່ຄັ້ງທີ**XII** ຂອງພັກ ເຊິ່ງມີຜູ້ສະໝັກທັງໝົດຈຳນວນ 31 ສະຫາຍ, ຍິງ 3 ສະຫາຍ ເລືອກໄດ້ຈຳນວນ 26 ສະຫາຍ, ຍິງ 3 ສະຫາຍ, ອີກ 5 ສະຫາຍເປັນຜູ້ແທນສຳຮອງ. ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ຜູ້ແທນສົມບູນ

1) ສະຫາຍ ປະເດີມພອນ ສົນທະນີ
2) ສະຫາຍ ນາງ ບຸນທະວີ ດວງລາສີ
3) ສະຫາຍ ຈັນສະໝອນ ພົມມະແສງ
4) ສະຫາຍ ແຫວນເພັດ ລັດດາວົງ
5) ສະຫາຍ ສົມສັກ ທົງຄຳຫານ
6) ສະຫາຍ ພົຈວ ສີເສີດ ສອນດາລາ
7) ສະຫາຍ ທອງດີ ຈັນທະວົງ
8) ສະຫາຍ ຈັນສີລອນ ສີສົມບູນ
9) ສະຫາຍ ປອ ສະໄໝ ໂພທິສານ
10) ສະຫາຍ ປອ ໂພສີ ແກ້ວສີພັນດອນ
11) ສະຫາຍ ວີໄລ ສີລາດວງໃຈ
12) ສະຫາຍ ຄຳຜ່ານ ສີລາວີ
13) ສະຫາຍ ບຸນເປື້ອ ຫຼອງຄຳໄຕ
14) ສະຫາຍ ບຸນຍູ້ ຈັນທະລັງສີ
15) ສະຫາຍ ຈັນເພັງ ສາຍທຳມະວົງ
16) ສະຫາຍ ນາງ ວາດສະໜາ ໂພໄຊຍະວົງ
17) ສະຫາຍ ມະໄລວອນ ສີປະເສີດ
18) ສະຫາຍ ເວີນມະນີ ມຸ່ງສີວົງສາ
19) ສະຫາຍ ສັກດາ ແກ້ວດວງສີ
20) ສະຫາຍ ນາງ ສູນໄຖ ໄຊຍະແສງ
21) ສະຫາຍ ພັອ ໂສພາ ໂພໄຊຍະວົງ
22) ສະຫາຍ ຄຳສະໄຫວ ວິລະກອນ
23) ສະຫາຍ ໂພສີ ຫຼວງສຸລີວັນ
24) ສະຫາຍ ບົວແກ້ວ ວົງຄຳຈັນ
25) ສະຫາຍ ໂພທິຍາ ວົງຈອມສີ
26) ສະຫາຍ ພອນປະເສີດ ລາຊາໂພ

2. ຜູ້ແທນສຳຮອງ

1) ສະຫາຍ ສຸນີ ນາມມະປັວລີ
2) ສະຫາຍ ສີວັນພະກອນ ວົງບຸນທັນ

3) ສະຫາຍ ຈັນທະວອນ ດ້ວງປັນຍາ

4) ສະຫາຍ ສຸດທິໂສມ ແກ້ວໄຊຍະວົງ

5) ສະຫາຍ ຈັນທະວອນ ສີຫາຈັກ

**VII.** ກອງປະຊຸມໃຫຍ່ຄັ້ງນີ້ ສຸດທີ່ມີຄວາມພາກພູມໃຈເປັນຢ່າງຍິ່ງ ແລະ ເປັນກຽດຢ່າງສູງ ທີ່ໄດ້ຮັບຟັງການໂອ້ລົມ ຂອງສະຫາຍ **ພົນເອກ ຈັນສະໝອນ ຈັນຍາລາດ** ກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ທີ່ໄດ້ນຳເອົາຄວາມເປັນຫ່ວງເປັນໃຍຂອງສູນກາງພັກ ແລະ ລັດຖະບານມາສູ່ກອງປະຊຸມໃຫຍ່ ພ້ອມທັງຕີລາຄາສູງຕໍ່ຜົນງານ ແລະ ໄຊຊະນະທີ່ແຂວງສາລະວັນຍາດມາໄດ້ໃນຊຸມປີຜ່ານມາ, ພ້ອມນັ້ນ ສະຫາຍຍັງໄດ້ຊີ້ທິດເຍືອງທາງຢ່າງໜັກແໜ້ນ ຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ໃຫ້ເຂົ້າສູ່ລວງເລິກ ເປັນຕົ້ນ: ແມ່ນການແບ່ງວຽກ, ແບ່ງຄວາມຮັບຜິດຊອບພາຍໃນຄະນະບໍລິຫານງານພັກ, ຄະນະປະຈຳພັກ ໃຫ້ລະອຽດ, ຈະແຈ້ງ; ເຊີດຊູຄວາມເປັນເຈົ້າການ ຕໍ່ໜ້າທີ່ການເມືອງ; ທຸ້ມເທເຫື່ອແຮງ, ສະຕິປັນຍາ, ຄວາມຮູ້-ຄວາມສາມາດ, ມີຄວາມເສຍສະຫຼະ ເພື່ອເຮັດສຳເລັດໜ້າທີ່ ທີ່ຖືກມອບໝາຍ; ຮີບຮ້ອນນຳພາ-ຊີ້ນຳການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ເປັນແຜນງານ, ໂຄງການ ແລະ ຫັນເປັນນິຕິກຳລະອຽດ; ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ ກໍ່ຄືປະຊາຊົນບັນດາເຜົ່າໃນທົ່ວແຂວງຮັບຮູ້, ເພື່ອສ້າງຄວາມເຂົ້າໃຈທີ່ເປັນເອກະພາບ ທາງດ້ານທັດສະນະ ແລະ ການກະທຳຕົວຈິງ ຕິດພັນກັບການຍູ້ແຮງຂະບວນການ ເພື່ອສ້າງຄວາມຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ. ສະຫາຍຍັງໄດ້ຮຽກຮ້ອງໃຫ້ຄະນະບໍລິຫານງານພັກແຂວງຊຸດໃໝ່ ແລະ ຜູ້ແທນກອງປະຊຸມໃຫຍ່ ຈົ່ງຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ, ລວມສູນປະຊາທິປະໄຕ ນຳພາເປັນໝູ່ຄະນະ, ເສີມຂະຫຍາຍມູນເຊື້ອສະມັກຄີປອງດອງບັນດາເຜົ່າ ແລະ ອອກແຮງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ໃຫ້ບັນລຸຜົນຕາມລະດັບຄາດໝາຍທີ່ວາງໄວ້ໃນແຕ່ລະດ້ານ.

**VIII.** ກອງປະຊຸມໃຫຍ່ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກ, ພະນັກງານລັດຖະກອນ , ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຊາວແຂວງສາລະວັນ, ຈົ່ງເຊີດຊູຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ, ນຳພາມະຫາຊົນປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປະກົດຜົນເປັນຈິງ, ເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍມານະຈິດ ບາກບັ່ນ, ບຸກບືນ ເຂົ້າໃນການປະຕິບັດໜ້າທີ່ການເມືອງ ແລະ ສ້າງສາພັດທະນາແຂວງສາລະວັນ ໃຫ້ໝັ້ນຄົງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ຕາມທິດສັງຄົມນິຍົມ ກໍຄືຄຳຂວັນກອງປະຊຸມໃຫຍ່ວາງອອກ ຢ່າງມີໄຊ.

ຕ. ຄະນະບໍລິຫານງານພັກແຂວງສາລະວັນ ສະໄໝທີ X

ເລຂາ

ປອ. ດາວວົງ ພອນແກ້ວ